**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 840 /ຫຄຊກລ.ຄມ
ນະຄອນຫລວງວຽງຈັນ, ວັນທີ 29 ກັນຍາ 2023.

# ບົດບັນທຶກກອງປະຊຸມ
# ວິຊາການກ່ຽວກັບການຄຸ້ມຄອງຖານຂໍ້ມູນ ລບຕ ປະຈຳໄຕມາດ 3 ປີ 2023

## I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຖານຂໍ້ມູນ ລບຕ ປະຈຳໄຕມາດ 3 ປີ 2023 ທີ່ຫ້ອງປະຊຸມຂອງ ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ, ຮອງຫົວໜ້າ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ຊ່ຽວຊານຕາງໜ້າຈາກອົງການສະຫະປະຊາຊາດ, ຫົວໜ້າໜ່ວຍງານຄຸ້ມ ຄອງຖານຂໍ້ມູນ, ວິຊາການໜ່ວຍງານຄຸ້ມຄອງຖານຂໍ້ມູນ ແລະ ໜ່ວຍງານໂຄສະນາ ສຶກສາຄວາມສ່ຽງໄພ ຫ້ອງການ ຄຊກລ, ວິຊາການ ແລະ ຊ່ຽວຊານ ຈາກ 10 ອົງການມະນຸດສະທຳ (ໂຄງການເກັບກູ້ລະເບີດແຫ່ງຊາດ, ອົງການເອັນ ພີເອ, ອົງການຮາໂລທຣັສ, ອົງການແມັກປະຈຳ ສປປ ລາວ, ອົງການ HI, ກອງກວດກູ້ເພື່ອມະນຸດສະທຳກອງທັບ 58, ສູນການແພດຟື້ນຟູໜ້າທີ່ການ, ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ, ໂຄງການຮ່ວມມືດ້ານອົງຄະທຽມ ແລະ ເຄື່ອງຄໍ້າຊູ, ອົງການ World Education), ບໍລິສັດມິນເຊີດເກັບກູ້ລະເບີດ, ບໍລິສັດອຸມມາເກັບກູ້ລະເບີດ ແລະ ບໍລິສັດ LCY ເກັບກູ້ລະເບີດ ແລະ ຊ່ຽວຊານຈາກບໍລິສັດເທທາເທັກ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 43 ທ່ານ.

## II ຈຸດປະສົງ

- ເພື່ອລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຖານຂໍ້ມູນ ປະຈຳໄຕມາດ
- ເພື່ອຮັບຟັງບັນຫາການປະຕິບັດງານການຄຸ້ມຄອງຖານຂໍ້ມູນ ໃນໄຕມາດ 3 ປີ 2023 ຂອງອົງການປະຕິບັດງານ ລວມທັງການພົວພັນປະສານງານ ລະຫວ່າງອົງການປະຕິບັດງານ ແລະ ອຳນາດການປົກຄອງທ້ອງຖິ່ນ.
- ເພື່ອລາຍງານຄວາມຄືບໜ້າ ແລະ ຜົນຂອງກອງປະຊຸມຮ່ວມກັນ ໃນວັນທີ 01 ກັນຍາ 2023 ທີ່ແຂວງຊຽງ ຂວາງ ກ່ຽວກັບການແກ້ໄຂບັນຫາ ພື້ນທີ່ທັບຊ້ອນ ລະຫວ່າງໂຄງການເກັບກູ້ລະເບີດແຫ່ງຊາດ ແລະ ອົງການ ເກັບກູ້ລະເບີດແມັກ ທີ່ແຂວງຊຽງຂວາງ.
- ເພື່ອນຳສະເໜີກ່ຽວກັບຄວາມຄືບໜ້າການນຳໃຊ້ເຄື່ອງມື VPN (Virtual Private Network), ArcGIS Online ແລະ Survey 123 ແລະ ບົດລາຍງານປະຈຳເດືອນ / Monthly Progress Report

## III ເນື້ອໃນກອງປະຊຸມ

ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນເວລາ 08:30 ໂມງ. ພາຍຫຼັງທ່ານປະທານກອງປະຊຸມໄດ້ກ່າວເປີດ , ກອງປະຊຸມໄດ້ຮັບຊາບການລາຍງານ ແລະ ປຶກສາຫາລືບັນດາບັນຫາດັ່ງລຸ່ມນີ້:

- ໜ່ວຍງານຄຸ້ມຄອງຖານຂໍ້ມູນ ລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຖານຂໍ້ມູນ ປະຈຳໄຕມາດ 3 ປີ 2023
- ອົງການປະຕິບັດງານ ທີ່ເຂົ້າຮ່ວມ ລາຍງານຜົນການຈັດຕັ້ງປະຕິບັດ ແລະ ບັນຫາການປະຕິບັດງານການຄຸ້ມຄອງ ຖານຂໍ້ມູນ ໃນໄຕມາດ 3 ປີ 2023

- ໜ່ວຍງານຄຸ້ມຄອງຖານຂໍ້ມູນ ນຳສະເໜີກ່ຽວກັບຄວາມຄືບໜ້າ ການນຳໃຊ້ເຄື່ອງມື VPN (Virtual private Network) ໃນການສົ່ງບົດລາຍງານ ໃນຂະແໜງການ ແລະ ເຄື່ອງມື Dashboard ທີ່ພັດທະນາໃນໂປຣແກັມ ArcGIS online
- ຊ່ຽວຊານໂຄງການ ນຳສະເໜີກ່ຽວກັບ ຄວາມຄືບໜ້າ ແລະ ແຜນການຈັດຕັ້ງປະຕິບັດໂຄງການ ພັດທະນາຄວາມອາດສາມາດ
- ໜ່ວຍງານຄຸ້ມຄອງຖານຂໍ້ມູນ ນຳສະເໜີການລາຍງານຄວາມຄືບໜ້າປະຈຳເດືອນ Monthly Progress Report ທີ່ພັດທະນາຈາກເຄື່ອງມື Survey 123
- ອົງການແມັກ ເກັບກູ້ລະເບີດ ປະຈຳ ສປປ ລາວ ນຳສະເໜີ ກ່ຽວກັບນິຍາມການກຳນົດ ຜູ້ໄດ້ຮັບຜົນປະໂຫຍດ ສຳລັບ ອົງການມະນຸດສະທຳ ໃນຂະແໜງການ ລບຕ.

## IV. ຂໍ້ຕົກລົງພາຍໃນກອງປະຊຸມ

- ບັນຫາກ່ຽວກັບການນຳໃຊ້ລະບົບການສົ່ງຂໍ້ມູນ ຜ່ານລະບົບ VPN ແມ່ນໃຫ້ໜ່ວຍງານຄຸ້ມຄອງຖານຂໍ້ມູນ ກວດກາຄືນ ແລະ ລາຍງານຕື່ມຕໍ່ຄະນະຫ້ອງການ ຄຊກລ;
- ໃຫ້ໜ່ວຍງານຄຸ້ມຄອງຖານຂໍ້ມູນ ຂື້ນແຜນລະອຽດ ກ່ຽວກັບການຈັດຝຶກອົບຮົມ ການນຳໃຊ້ເຄື່ອງມືໃນການຄຸ້ມຄອງຖານຂໍ້ມູນ;
- ໃຫ້ໜ່ວຍງານຄຸ້ມຄອງຖານຂໍ້ມູນ ຮ່າງໜັງສືລາຍງານ ກ່ຽວກັບຄວາມຄືບໜ້າການແກ້ໄຂບັນຫາພື້ນທີ່ທັບຊ້ອນ ລະຫວ່າງອົງການ ແມັກ ເກັບກູ້ລະເບີດ ແລະ ຄກລ ຢູ່ ແຂວງຊຽງຂວາງ ເພື່ອລາຍງານໃຫ້ຄະນະກຳມະການແກ້ໄຂບັນຫາພື້ນທີ່ທັບຊ້ອນ;
- ເລື່ອງພາລະບົດບາດຂອງຜູ້ປະສານງານ ກ່ຽວກັບບົດບາດຍິງຊາຍ ໃຫ້ໜ່ວຍງານຄຸ້ມຄອງຖານຂໍ້ມູນ ສົ່ງໃຫ້ຜູ້ປະສານງານບົດບາດຍິງຊາຍ ທີ່ເປັນຕົວແທນ ຈາກແຕ່ລະອົງການ ເພື່ອແລກປ່ຽນຄວາມຄິດເຫັນຮ່ວມກັນ ແລະ ໃຫ້ຮ່າງແຜນການປະຕິບັດງານ ໃນໄຕມາດ 4 ປີ 2023 ແລະ ແຜນປີ 2024 ຢ່າງລະອຽດ;
- ໃຫ້ແຕ່ລະອົງການ ເພີ່ມທະວີຄວາມເອົາໃຈໃສ່ ໃນການລາຍງານ ບົດລາຍງານຄວາມຄືບໜ້າປະຈຳເດືອນ ໃຫ້ທັນເວລາ;
- ໃຫ້ເພີ່ມທະວີການກວດກາ ແລະ ການປະສານງານຮ່ວມກັນ ລະຫວ່າງອົງການປະຕິບັດງານ ແລະ ຄະນະກຳມະການຄຸ້ມຄອງ ຢ່າງໃກ້ຊິດ;
- ນິຍາມການກຳນົດ ຜູ້ໄດ້ຮັບຜົນປະໂຫຍດ ສຳລັບ ອົງການມະນຸດສະທຳ ໃນຂະແໜງການ ລບຕ, ຫ້ອງການ ຄຊກລ ຈະສົ່ງໃຫ້ ບັນດາໜ່ວຍງານຝ່າຍປະຕິບັດງານ (ໜ່ວຍງານຄຸ້ມຄອງການສຳຫຼວດ ແລະ ເກັບກູ້, ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໜ່ວຍງານຄຸ້ມຄອງຄຸນນະພາບ) ເພື່ອຄົ້ນຄວ້າຮ່ວມກັນຕື່ມ.

## V. ສະຫຼຸບ

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄຳຂອບໃຈບັນດາຜູ້ແທນທີ່ເສຍສະຫຼະເວລາ ເຂົ້າຮ່ວມກອງປະຊຸມວິຊາການຄັ້ງນີ້ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານ ລບຕ ມີສຸຂະພາບເຂັ້ມແຂງ, ພາລະນາໄມສົມບູນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 14:45 ໂມງ ຂອງວັນທີ 14 ກັນຍາ 2023.

| ປະທານກອງປະຊຸມ | ໜ່ວຍງານຄຸ້ມຄອງຖານຂໍ້ມູນ |
|---|---|
| ຫ້ອງການ ຄຊກລ | |
| ບຸນເພັງ ສີສະຫວັດ | |